ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມແຜນການ ແລະ ການເງິນ

4718 - - - -
ເລກທີ /ກຜງ
ນະຄອນຫລວງວຽງຈັນ, **ວັນທີ** 21 ກັນຍາ 2026

ໜັງສືເຊີນເຂົ້າຮ່ວມການສົມທຽບລາຄາ

ເຖິງ: _____

1. ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ ແລະ ການເງິນ ໄດ້ຮັບທຶນຊ່ວຍເຫຼືອລ້າ ຈາກໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ: ໂຄງການຮຽນຮູ້ ແລະ ຄວາມເທົ່າທຽມ (GPE III-LEAP) ພາຍໃຕ້ການຄຸ້ມຄອງຂອງທະນາຄານໂລກ ເພື່ອດຳເນີນການສົມທຽບລາຄາການຈັດພິມປຶ້ມຈຳນວນ 3 ລາຍການ ສະໜອງໃຫ້ພະແນກຄຸ້ມຄອງຊັບສິນ ແລະ ອອກແບບກໍ່ສ້າງ, ຫ້ອງການກະຊວງສຶກສາທິການ ແລະ ກິລາ, ກົມການສຶກສາກ່ອນໄວຮຽນ ແລະ ກົມສາມັນສຶກສາ.
2. ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ ແລະ ການເງິນ, ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ GPE III-LEAP ຂໍເຊີນໂຮງພິມຂອງທ່ານເຂົ້າຍື່ນຊອງສົມທຽບລາຄາສະໜອງການຈັດພິມປຶ້ມຈຳນວນ 03 ລາຍການ, **ໄລຍະເວລາໃນການ**ສົ່ງມອບເຖິງສະຖານທີ ແມ່ນ 45 **ວັນ (ພາຍຫຼັງເຊັນສັນຍາ)**.
3. ການສົມທຽບລາຄານີ້ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ້ມເຕີມສຳລັບມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທີ 24 ມິຖຸນາ 2019. ບໍລິສັດ ຫຼື ໂຮງພິມທີ່ສົນໃຈເຊີນຕິດຕໍ່ເອົາຊອງສົມທຽບລາຄາ ນັບແຕ່ວັນທີ 21 ກັນຍາ 2026 – 05 ຕຸລາ 2026 ຕາມເວລາໂມງລັດຖະການ.
4. ຊອງສະເໜີລາຄາຈະຕ້ອງສົ່ງກ່ອນ ເວລາ 14:00 ໂມງ ຂອງວັນທີ 05 ຕຸລາ 2026 ແລະ ຊອງສະເໜີລາຄາທຸກໆຊອງຈະໄດ້ເປີດໃນເວລາ 14:05 ໂມງ ຂອງມື້ດຽວກັນ ໂດຍຊ່ອງໜ້າຄະນະກຳມະການ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ ທີ່ຫ້ອງປະຊຸມຫ້ອງການປະສານງານສາກົນເພື່ອການສຶກສາ (ECU), ຊັ້ນ 3 ຕຶກ ICT, ກົມແຜນການ ແລະ ການເງິນ, ກະຊວງສຶກສາທິການ ແລະ ກິລາ. ສະຖານທີ່ຖະໜົນລ້ານຊ້າງ, ຕຶກ ICT ຊັ້ນ 3, ຕູ້ ປນ. 067 ໂທ/ແຟັກ: (+865 21) 243672; ອີເມວ: ecudp.laopdr@moes.edu.la

ຫົວໜ້າກົມ

ອະນຸພາ ແກ້ວວົງສາ